# ແບບຟອມລົງທະບຽນນຳໃຊ້ບໍລິການ BCEL i-Bank (ນິຕິບຸກຄົນ)

ຮຽນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

ພວກຂ້າພະເຈົ້າມີຈຸດປະສົງ ຂໍລົງທະບຽນນຳໃຊ້ບໍລິການ BCEL i-Bank ຂໍ້ມູນຕ່າງໆຂອງພວກຂ້າພະເຈົ້າມີດັ່ງນີ້:

ຊື່ນິຕິບຸກຄົນ: ........................................................................................................................

ໂທລະສັບຕັ້ງໂຕະ: ........................... ເບີໂທລະສັບມືຖື: ........................... ອີເມລ໌: ................................................

## ໑) ຂໍ້ມູນບັນຊີ:

| | ເລກບັນຊີ | ຊື່ບັນຊີ | ເລືອກ 1 ບັນຊີຕັດຄ່າທຳນຽມລາຍເດືອນ |
|---|---|---|---|
| ເລກບັນຊີ 1 | | | ☐ |
| ເລກບັນຊີ 2 | | | ☐ |
| ເລກບັນຊີ 3 | | | ☐ |
| ເລກບັນຊີ 4 | | | ☐ |
| ເລກບັນຊີ 5 | | | ☐ |
| ເລກບັນຊີ 6 | | | ☐ |
| ເລກບັນຊີ 7 | | | ☐ |

## ໒) ລາຍລະອຽດຜູ້ນຳໃຊ້:

| | ສິດຜູ້ນຳໃຊ້ | ປະເພດ OTP ( ຈຳເປັນສຳລັບ ຜູ້ສ້າງລາຍການ ) | ເບີມືຖື | ອີເມລ໌ |
|---|---|---|---|---|
| **User A** | ☐ ຜູ້ເບິ່ງບັນຊີ<br>☐ ຜູ້ສ້າງລາຍການ<br>☐ ຜູ້ກວດກາ<br>☐ ຜູ້ອະນຸມັດ | ☐ **SMS OTP**<br>☐ **Token OTP** | | |
| **User B** | ☐ ຜູ້ເບິ່ງບັນຊີ<br>☐ ຜູ້ສ້າງລາຍການ<br>☐ ຜູ້ກວດກາ<br>☐ ຜູ້ອະນຸມັດ | ☐ **SMS OTP**<br>☐ **Token OTP** | | |
| **User C** | ☐ ຜູ້ເບິ່ງບັນຊີ<br>☐ ຜູ້ສ້າງລາຍການ<br>☐ ຜູ້ກວດກາ<br>☐ ຜູ້ອະນຸມັດ | ☐ **SMS OTP**<br>☐ **Token OTP** | | |
| **User D** | ☐ ຜູ້ເບິ່ງບັນຊີ<br>☐ ຜູ້ສ້າງລາຍການ<br>☐ ຜູ້ກວດກາ<br>☐ ຜູ້ອະນຸມັດ | ☐ **SMS OTP**<br>☐ **Token OTP** | | |
| **User E** | ☐ ຜູ້ເບິ່ງບັນຊີ<br>☐ ຜູ້ສ້າງລາຍການ<br>☐ ຜູ້ກວດກາ<br>☐ ຜູ້ອະນຸມັດ | ☐ **SMS OTP**<br>☐ **Token OTP** | | |
| **User F** | ☐ ຜູ້ເບິ່ງບັນຊີ<br>☐ ຜູ້ສ້າງລາຍການ<br>☐ ຜູ້ກວດກາ<br>☐ ຜູ້ອະນຸມັດ | ☐ **SMS OTP**<br>☐ **Token OTP** | | |
| **User G** | ☐ ຜູ້ເບິ່ງບັນຊີ<br>☐ ຜູ້ສ້າງລາຍການ<br>☐ ຜູ້ກວດກາ<br>☐ ຜູ້ອະນຸມັດ | ☐ **SMS OTP**<br>☐ **Token OTP** | | |

| ເອກະສານຕິດຄັດ: | (For BCEL) ຜູ້ຮັບຟອມສະໝັກ | (For BCEL) ແຈ້ງຜົນລົງທະບຽນ |
|---|---|---|
| 1. ບັດປະຈຳຕົວ ຫຼື ສາມະໂນຄົວ ຫຼື ໜັງສືເດີນທາງ ຂອງເຈົ້າຂອງບັນຊີ — ຈຳນວນ 1 ຊຸດ<br>- ສຳລັບຄົນຕ່າງປະເທດ ຕ້ອງມີ ໃບອະນຸຍາດ ພັກເຊົາ ຫຼື ເຮັດວຽກ — ຈຳນວນ 1 ຊຸດ<br>2. ໃບມອບສິດໃຫ້ຜູ້ມາຍື່ນເອກະສານແທນ ກໍລະນີເຈົ້າຂອງບັນຊີບໍ່ໄດ້ມາຍື່ນດ້ວຍຕົວເອງ — ຈຳນວນ 1 ຊຸດ | ຊື່ແຈ້ງ ........................ BCEL ........... | ☐ ສຳເລັດແລ້ວ |

## ໒໐ ກຳນົດສິດທິເຂົ້າເຖິງບໍລິການ:

| | ເບິ່ງຂໍ້ມູນບັນຊີ ແລະ ພິມລາຍງານ | ໂອນເງິນລະຫວ່າງບັນຊີ ທຄຕລ ແລະ ໂອນເງິນລອຍ | ໂອນເງິນຂ້າມທະນາຄານ ພາຍໃນປະເທດ | ໂອນເງິນຕ່າງປະເທດ ຜ່ານລະບົບ SWIFT | ຊຳລະໃບບິນ | ໂອນເງິນເດືອນ |
|---|---|---|---|---|---|---|
| **User A** | ☐ | ☐ | ☐ | ☐ | ☐ | ☐ |
| **User B** | ☐ | ☐ | ☐ | ☐ | ☐ | ☐ |
| **User C** | ☐ | ☐ | ☐ | ☐ | ☐ | ☐ |
| **User D** | ☐ | ☐ | ☐ | ☐ | ☐ | ☐ |
| **User E** | ☐ | ☐ | ☐ | ☐ | ☐ | ☐ |
| **User F** | ☐ | ☐ | ☐ | ☐ | ☐ | ☐ |
| **User G** | ☐ | ☐ | ☐ | ☐ | ☐ | ☐ |

## ໒໐ ກຳນົດສິດທິໃນການເຂົ້າເຖິງບັນຊີ ແລະ ວົງເງິນນຳໃຊ້: (ໝາຍເຫດ: ຖ້າບໍ່ໄດ້ລະບຸວົງເງິນຕໍ່ລາຍການ ຫຼື ຕໍ່ມື້ ໃຫ້ຜູ້ນຳໃຊ້ ແມ່ນຖືວ່ານຳໃຊ້ວົງເງິນສູງສຸດ 6,000,000,000 ກີບ)

| | ບັນຊີ 1 | ບັນຊີ 2 | ບັນຊີ 3 | ບັນຊີ 4 | ບັນຊີ 5 | ບັນຊີ 6 | ບັນຊີ 7 | (ຖ້າມີ) ວົງເງິນສູງສຸດຕໍ່ລາຍການ ສູງສຸດ 6,000,000,000 ກີບ. | (ຖ້າມີ) ວົງເງິນສູງສຸດຕໍ່ມື້ ສູງສຸດ 6,000,000,000 ກີບ. |
|---|---|---|---|---|---|---|---|---|---|
| **User A** | ☐ | ☐ | ☐ | ☐ | ☐ | ☐ | ☐ | | |
| **User B** | ☐ | ☐ | ☐ | ☐ | ☐ | ☐ | ☐ | | |
| **User C** | ☐ | ☐ | ☐ | ☐ | ☐ | ☐ | ☐ | | |
| **User D** | ☐ | ☐ | ☐ | ☐ | ☐ | ☐ | ☐ | | |
| **User E** | ☐ | ☐ | ☐ | ☐ | ☐ | ☐ | ☐ | | |
| **User F** | ☐ | ☐ | ☐ | ☐ | ☐ | ☐ | ☐ | | |
| **User G** | ☐ | ☐ | ☐ | ☐ | ☐ | ☐ | ☐ | | |

## ໒໐ ກຳນົດ ຮູບແບບ ແລະ ເງື່ອນໄຂອະນຸມັດລາຍການ:

| ເລືອກ | ຮູບແບບ ລຽງລຳດັບກຸ່ມ | ເງື່ອນໄຂອະນຸມັດລາຍການ ☐ ☐ ☐ ☐ ☐ ☐ ☐ |
|---|---|---|
| ☐ | ສ້າງລາຍການ ແລ້ວສຳເລັດທັນທີ. | **User A** **User B** **User C** **User D** **User E** **User F** **User G** |
| ☐ | ສ້າງລາຍການ ແລ້ວໄປຜ່ານ ຜູ້ອະນຸມັດ . | ຜ່ານ ຜູ້ອະນຸມັດ ດ້ວຍເງື່ອນໄຂ … ໃນ … ຂອງຜູ້ອະນຸມັດທັງໝົດ. |
| ☐ | ສ້າງລາຍການ ແລ້ວໄປຜ່ານ ຜູ້ກວດກາ ແລ້ວໄປຜ່ານ ຜູ້ອະນຸມັດ. | ຜ່ານ ຜູ້ກວດກາ ດ້ວຍເງື່ອນໄຂ … ໃນ … ຂອງຜູ້ກວດກາທັງໝົດ.<br>ຜ່ານ ຜູ້ອະນຸມັດ ດ້ວຍເງື່ອນໄຂ … ໃນ … ຂອງຜູ້ອະນຸມັດທັງໝົດ. |
| ☐ | ສ້າງລາຍການ ແລ້ວໄປຜ່ານ ຜູ້ກວດກາ ແລ້ວໄປຜ່ານ ຜູ້ອະນຸມັດກຸ່ມ A ແລະ ຜູ້ອະນຸມັດກຸ່ມ B. | ຜ່ານ ຜູ້ກວດກາ ດ້ວຍເງື່ອນໄຂ … ໃນ … ຂອງຜູ້ກວດກາທັງໝົດ.<br>ຜ່ານ ຜູ້ອະນຸມັດກຸ່ມ A ດ້ວຍເງື່ອນໄຂ … ໃນ … ຂອງຜູ້ອະນຸມັດທັງໝົດ.<br>ຜ່ານ ຜູ້ອະນຸມັດກຸ່ມ B ດ້ວຍເງື່ອນໄຂ … ໃນ … ຂອງຜູ້ອະນຸມັດທັງໝົດ. |

**ໝາຍເຫດ:** ຖ້າຮູບແບບ ແລະ ເງື່ອນໄຂບໍ່ກົງກັບຂໍ້ທີ່ໃຫ້ເລືອກດ້ານເທິງ ໃຫ້ລູກຄ້າຂຽນໃບສະເໜີ ທີ່ອະທິບາຍຮູບແບບ ແລະ ເງື່ອນໄຂການອະນຸມັດຂັດແນບມາພ້ອມຟອມສະໝັກ.

ພວກຂ້າພະເຈົ້າຮັບປະກັນວ່າລາຍລະອຽດຂອງຂໍ້ມູນທັງໝົດທີ່ພວກຂ້າພະເຈົ້າໃຫ້ໄວ້ໃນນີ້ເປັນຂໍ້ມູນທີ່ຖືກຕ້ອງ,ຄົບຖ້ວນ ແລະ ເປັນຄວາມຈິງທຸກປະການ ພວກຂ້າພະເຈົ້າໄດ້ອ່ານທຸກຂໍ້ຄວາມ, ເຂົ້າໃຈເປັນທີ່ຮຽບຮ້ອຍ, ຕົກລົງ, ຍິນຍອມປະຕິບັດຕາມເງື່ອນໄຂ ແລະ ຂໍ້ຜູກພັນການໃຊ້ບໍລິການ BCEL i-Bank ທີ່ແນບກັບແບບຟອມສະໝັກນີ້ ຈຶ່ງໄດ້ລົງລາຍເຊັນໄວ້ເພື່ອເປັນຫຼັກຖານທາງກົດໝາຍ.

| **(ສຳລັບ ທຄຕລ)** ຫົວໜ້າຂະແໜງ / ຜູ້ອະນຸມັດ *(ເຊັນ ແລະ ຊື່ແຈ້ງ)*: | **(ສຳລັບ ທຄຕລ)** ພະນັກງານຜູ້ລົງທະບຽນ *(ເຊັນ, ຈ້ຳກາກວດລາຍເຊັນ ແລະ ຊື່ແຈ້ງ)*: | **ລາຍເຊັນເຈົ້າຂອງບັນຊີ**<br>***ເຊັນ, ຊື່ແຈ້ງ ແລະ ກາປະທັບ(ຖ້າມີ)*** |
|---|---|---|
| | | ວັນທີ……… ເດືອນ………… ປີ………… |

# ເງື່ອນໄຂ ແລະ ຂໍ້ຜູກພັນໃນການນໍາໃຊ້ບໍລິການ BCEL i-Bank

**ມາດຕາ 1: ອະທິບາຍຄໍາສັບ**

1.1. ທຄຕລ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

1.2. BCEL i-Bank: ເປັນບໍລິການອອນລາຍຂອງ ທຄຕລ ທີ່ໃຫ້ລູກຄ້າສາມາດໃຊ້ບໍລິການຕ່າງໆຂອງ ທຄຕລ ຜ່ານທາງອິນເຕີເນັດ.

1.3. ເຈົ້າຂອງບັນຊີ/ລູກຄ້າ: ຜູ້ທີ່ມີສິດໃນສັ່ງຈ່າຍ, ຄຸ້ມຄອງ, ນໍາໃຊ້ບັນຊີ ຕາມກົດລະບຽບຂອງທະນາຄານ ແລະ ກົດໝາຍ ສປປ ລາວ.

1.4. ຜູ້ໃຊ້ບໍລິການ: ເປັນບຸກຄົນທີ່ໄດ້ຮັບສິດໃນການເຂົ້າລະບົບ ແລະ ນໍາໃຊ້ລະບົບການໃຫ້ບໍລິການ BCEL i-Bank ຕາມແບບຟອມສະໝັກ ຫຼື ຟອມປ່ຽນແປງ ຈາກລູກຄ້າ.

1.5. ຊອງລະຫັດລັບ: ເປັນຊອງທີ່ມີ User ID, ລະຫັດຜ່ານ, ເຄື່ອງ Token OTP (ຖ້າມີ) ທີ່ທາງ ທຄຕລ ໄດ້ປະກອບໃຫ້ຜູ້ໃຊ້ ນໍາໃຊ້ເພື່ອເຂົ້າສູ່ລະບົບຄັ້ງທໍາອິດ.

1.6. User ID: ລະຫັດທີ່ເປັນ ຕົວເລກ ຫຼື ຕົວອັກສອນ ເພື່ອໃຊ້ໃນການເຂົ້າລະບົບ BCEL i-Bank.

1.7. ລະຫັດຜ່ານ: ເປັນລະຫັດທີ່ໃຊ້ Log on ເຂົ້າລະບົບໃຫ້ບໍລິການ BCEL i-Bank.

1.8. ເລກລະຫັດ OTP: ເປັນລະຫັດລັບທີ່ໃຊ້ຄັ້ງດຽວ ເພື່ອຢັ້ງຢືນຄວາມເປັນເຈົ້າຂອງທຸລະກໍາ ໃນລະບົບ BCEL i-Bank.

1.9. Token OTP: ເປັນຮູບແບບການຮັບເລກລະຫັດ OTP ຜ່ານ ອຸປະກອນອອກລະຫັດ.

1.10. SMS OTP: ເປັນຮູບແບບການຮັບເລກລະຫັດ OTP ຜ່ານ ຂໍ້ຄວາມສັ້ນເທິງໂທລະສັບມືຖື.

1.11. ເວລາ Cut-off: ເວລາທີ່ລະບົບ ຢຸດປະມວນຜົນທຸລະກໍາຊົ່ວຄາວເຊັ່ນ: ການສະຫຼຸບບັນຊີທ້າຍມື້/ເດືອນ/ໄຕມາດ ນັບແຕ່ເວລາ 20:00 ໂມງເປັນຕົ້ນໄປຂອງທຸກໆວັນ (GMT+7), ແລະ ການສະຫຼຸບບັນຊີທ້າຍປີ (ທະນາຄານຈະແຈ້ງໃຫ້ຮັບຊາບກ່ອນການສະຫຼຸບ). ແລະ ເຫດການອື່ນໆ ທີ່ມີຜົນຕໍ່ການເຮັດທຸລະກໍາຂອງລູກຄ້າ.

1.12. ໂມງ Clearing: ແມ່ນໂມງທີ່ທະນາຄານຮັບລາຍການໂອນເງິນຂອງລູກຄ້າໄປປະມວນຜົນກັບພາກສ່ວນທະນາຄານພາຍນອກ.

1.13. ມື້ສະຫຼຸບບັນຊີທ້າຍປີ: ມື້ທີ່ທະນາຄານຢຸດບໍລິການຊົ່ວຄາວ ເພື່ອໃຫ້ທະນາຄານສາມາດສະຫຼຸບຂໍ້ມູນທ້າຍປີ.

**ມາດຕາ 2: ເງື່ອນໄຂພື້ນຖານຂອງຜູ້ໃຊ້ບໍລິການ**

2.1. ຕ້ອງມີບັນຊີເງິນຝາກ ປະເພດ ຝາກປະຫຍັດ ຫຼື ກະແສລາຍວັນ ນໍາທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

2.2. ມີອີເມວ ແລະ ເບີໂທ ທີ່ສາມາດຕິດຕໍ່ຫາໄດ້.

2.3. ຕ້ອງມີອຸປະກອນທີ່ສາມາດຮອງຮັບການນໍາໃຊ້ລະບົບອອນລາຍເຊັ່ນ: ສາມາດເຊື່ອມຕໍ່ອິນເຕີເນັດ, ມີໜ້າຈໍສະແດງຜົນຕັ້ງແຕ່ 4 ນິ້ວ (inches) ຂຶ້ນໄປ, ບຣາວເຊີ້ ທີ່ອັບເດດ ແລະ ອື່ນໆ.

2.4. ມີອາຍຸ 18 ປີຂຶ້ນໄປ, ມີຄວາມຮັບຜິດຊອບຕໍ່ທຸລະກໍາດ້ານອີເລັກໂຫຼນິກຕາມລະບຽບກົດໝາຍວາງໄວ້.

**ມາດຕາ 3: ບໍລິການ ແລະ ຂອບເຂດການໃຫ້ບໍລິການ BCEL i-Bank**

3.1. ບໍລິການຕ່າງໆທີ່ບໍ່ແມ່ນການໂອນເງິນ ເຊັ່ນ: ປັບແຕ່ງການຕັ້ງຄ່າການນໍາໃຊ້, ປ່ຽນລະຫັດຜ່ານ, ບໍລິການຕິດຕາມບັນຊີຕ່າງໆ, ຕິດ ຕາມແຊັກ, ເບິ່ງການເຄື່ອນໄຫວຍ້ອນຫຼັງ, ດຶງລາຍການບັນຊີສໍາຮອງຍ້ອນຫຼັງ ແລະ ໃບຢັ້ງຢືນການໂອນເງິນ ແມ່ນສາມາດເຂົ້າເຖິງໄດ້ ຕະຫຼອດ 24 ຊົ່ວໂມງ.

3.2. ບໍລິການໂອນເງິນລະຫວ່າງບັນຊີຂອງຕົນເອງ, ໂອນເງິນພາຍໃນທຄຕລ, ໂອນເງິນພາຍໃນທຄຕລ ຫຼາຍບັນຊີ ແລະ ບໍລິການໂອນເງິນເດືອນ ໂດຍປົກກະຕິສາມາດດໍາເນີນການໄດ້ເລີຍທຸກເວລາ ແຕ່ຍົກເວັ້ນທຸລະກໍາສ້າງຂຶ້ນໃນຊ່ວງເວລາ Cut Off, ທຸກທຸລະກໍາທີ່ເກີດຂຶ້ນໃນຊ່ວງ Cut Off ຈະຖືກຍົກໄປດໍາເນີນການຫຼັງ ໂມງ Cut Off ຫຼື ໃນວັນຖັດໄປ ແຕ່ບາງທຸລະກໍາກໍ່ບໍ່ສາມາດສ້າງ ຫຼື ອະນຸມັດລາຍການໄດ້ເຊັ່ນບໍລິການໂອນເງິນເດືອນເປັນຕົ້ນ.

3.3. ບໍລິການໂອນເງິນຂ້າມທະນາຄານພາຍໃນປະເທດ: ແມ່ນບໍລິການໂອນເງິນ ຈາກບັນຊີ ທຄຕລ ໄປຫາບັນຊີປາຍທາງ ຂອງທະນາຄານອື່ນທີ່ມີສໍານັກງານຢູ່ພາຍໃນ ສປປ ລາວ. ລາຍລະອຽດການບໍລິການມີດັ່ງນີ້:

• ລາຍການໂອນເງິນໃນວົງເງິນບໍ່ເກີນທຽບເທົ່າ 100.000.000 ກີບ ສາມາດຮັບເງິນໄດ້ພາຍໃນມື້ ສະເພາະລາຍການທີ່ສ້າງກ່ອນເວລາ 14:30 ໂມງ ໃນວັນລັດຖະການ, ໂດຍຈະຖືກສົ່ງຫາທະນາຄານປາຍທາງ ສອງຄັ້ງຕໍ່ວັນຄື 10:30 ໂມງ ແລະ 14:30 ໂມງ. ສ່ວນລາຍການໂອນເງິນຫຼັງ 14:30 ໂມງ ແລະ ໃນວັນພັກລັດຖະການ ຈະຖືກສົ່ງໃນວັນລັດຖະການຖັດໄປ.

• ລາຍການໂອນເງິນໃນວົງເງິນເກີນ 100.000.000 ກີບຂຶ້ນໄປ ສາມາດຮັບເງິນໄດ້ພາຍໃນມື້, ລາຍການຈະຖືກດໍາເນີນການສົ່ງຫາທະນາຄານປາຍທາງ ແຕ່ 10:00 ໂມງ ຫາ 15:29 ໂມງ. ສ່ວນລາຍການໂອນເງິນຫຼັງ 15:30 ໂມງ ແລະ ໃນວັນພັກລັດຖະການ ຈະຖືກສົ່ງໃນວັນລັດຖະການຖັດໄປ.

• ສໍາລັບວັນພັກສະຫຼຸບບັນຊີທ້າຍປີຂອງທະນາຄານ ລູກຄ້າຈະບໍ່ສາມາດເຮັດທຸລະກໍາການໂອນເງິນຂ້າມທະນາຄານໄດ້.

3.4. ບໍລິການໂອນເງິນຕ່າງປະເທດ: ເປັນການໂອນເງິນຈາກບັນຊີ ທຄຕລ ໄປຫາບັນຊີປາຍທາງ ຂອງທະນາຄານອື່ນຢູ່ຕ່າງປະເທດ ລາຍລະອຽດການບໍລິການມີດັ່ງນີ້:

• ການຕື່ມຂໍ້ມູນຂອງຜູ້ຮັບເງິນ ແລະ ທະນາຄານປາຍທາງຕ້ອງໃຫ້ລະອຽດຄົບຖ້ວນ, ໂດຍສະເພາະແມ່ນ ຈຸດປະສົງຂອງ ການໂອນແມ່ນຕ້ອງໄດ້ລະບຸຢ່າງຊັດເຈນ, ເພື່ອຫຼີກລ້ຽງການຂໍຂໍ້ມູນເພີ່ມເຕີມ ເຊິ່ງຈະເຮັດໃຫ້ເກີດຄວາມຊັກຊ້າໃນການ ດໍາເນີນທຸລະການໂອນ.

• ລາຍການໂອນເງິນໃນວັນລັດຖະການ ແຕ່ຕົ້ນມື້ ຫາ 16:00 ໂມງ, ລະບົບຈະສົ່ງລາຍການໂອນເງິນໄປຍັງທະນາຄານປາຍ ທາງພາຍໃນມື້. ລາຍການໂອນເງິນພາຍຫຼັງ 16:00 ໂມງ ແລະ ວັນພັກລັດຖະການ, ລະບົບຈະສົ່ງລາຍການໂອນເງິນໄປຍັງທະນາຄານ ປາຍທາງໃນວັນລັດຖະການຖັດໄປ.

• ຊ່ວງເວລາທີ່ລູກຄ້າຈະໄດ້ຮັບເງິນ ຂຶ້ນກັບຄວາມແຕກຕ່າງທາງດ້ານເວລາ (Time Zone) ຂອງ ແຕ່ລະຂົງເຂດ..

3.5. ບໍລິການໂອນລອຍ: ເປັນທຸລະກໍາການໂອນເງິນທີ່ໂອນເຂົ້າຜູ້ຮັບທີ່ບໍ່ມີບັນຊີກັບ ທຄຕລ ເຊິ່ງສາມາດດໍາເນີນການໄດ້ເລີຍທັນທີ ແຕ່ຜູ້ຮັບເງິນຕ້ອງມາຮັບເງິນທີ່ຈຸດບໍລິການຂອງ ທຄຕລ ໃນໂມງລັດຖະການເທົ່ານັ້ນ.

3.6. ບໍລິການໂອນລອຍບີຄໍາ (BCOM): ເປັນທຸລະກໍາການໂອນເງິນທີ່ໂອນເຂົ້າຜູ້ຮັບທີ່ບໍ່ມີບັນຊີກັບ ທຄຕລ ເຊິ່ງສາມາດດາເນີນການໄດ້ເລີຍທັນທີ ແຕ່ຜູ້ຮັບເງິນຕ້ອງມາຮັບເງິນທີ່ຈຸດບໍລິການຂອງ ທຄຕລ ຫຼື ຄູ່ແທນບີຄໍາໄດ້.

3.7. ບໍລິການຊໍາລະບິນ: ເປັນບໍລິການທີ່ໃຊ້ຊໍາລະສະສາງຄ່າ ນໍ້າປະປາ, ໄຟຟ້າ, ໂທລະສັບ, ອິນເຕີເນັດ, ສາຍເຊົ່າ Lease Line, ຕື່ມບັດໂທລະສັບ, ມອບອາກອນ, ຕື່ມບັດນໍ້າມັນປິໂຕເຫຣດ, ບັດ Smart Tax ແລະ ອື່ນໆ ສາມາດດາເນີນການໄດ້ເລີຍໃນທັນທີ ທີ່ສາເລັດໃນການສ້າງລາຍການຊໍາລະຍອດໜີ້, ແຕ່ສະ ເພາະໄຟຟ້າ ແລະ ນໍ້າປະປາ ຫຼັງ 3:30 ໂມງແລງຂອງມື້ທ້າຍເດືອນ ລະບົບຈະບໍ່ໃຫ້ຊໍາລະຈົນ ກ່ວາຈະຮອດມື້ຖັດໄປ.

3.8. ຕັ້ງເວລາໂອນລ່ວງໜ້າ: ເປັນບໍລິການທີ່ໃຫ້ລູກຄ້າສາມາດຕັ້ງວັນທີ່ໂອນເງິນໄປໃນມື້ທີ່ຢູ່ໃນອານາຄົດ ສູງສຸດບໍ່ເກີນ 5 ປີ ແລະ ລາຍການຈະຖືກດໍາເນີນການໄດ້ຕາມມື້ທີ່ກໍານົດ ເຊິ່ງບັນຊີຕົ້ນທາງຕ້ອງມີເງິນພຽງພໍທີ່ຈະຕັດໃນມື້ດັ່ງກ່າວເທົ່ານັ້ນ.

3.9. ບໍລິການບັນຊີຮຸ້ນ: ແມ່ນການໂອນເງິນເຂົ້າ ແລະ ຖອນເງິນອອກຈາກບັນຊີຮຸ້ນຂອງຜູ້ນໍາໃຊ້ ທີ່ໄດ້ລົງທະບຽນກັບບໍລິສັດຕົວແທນຊື້ຂາຍຮຸ້ນໃດໜຶ່ງ ທີ່ໃຫ້ບໍລິການກັບ ທຄຕລ.

**ມາດຕາ 4: ລາຍການທຸລະກໍາທີ່ບໍ່ສໍາເລັດ**

ຜູ້ໃຊ້ບໍລິການຮັບຊາບວ່າ ທຸລະກໍາການເງິນ ຂອງຜູ້ໃຊ້ທີ່ສ້າງຂຶ້ນ ຈະບໍ່ສໍາເລັດ ແລະ ລາຍການຈະຖືກຍົກເລີກໂດຍອັດຕະໂນມັດໃນບາງກໍລະນີລຸ່ມນີ້:

4.1. ຍອດເງິນທີ່ໃຊ້ໄດ້ໃນບັນຊີຕົ້ນທາງ ບໍ່ພຽງພໍ ທີ່ຈະຕັດຕາມຈໍານວນເງິນທີ່ຕ້ອງການໂອນ ໃນທຸກກໍລະນີການໂອນເງິນ.

4.2. ຈໍານວນເງິນທີ່ໂອນ ເກີນວົງເງິນທີ່ໄດ້ກໍານົດໄວ້ ເຊັ່ນ ວົງເງິນພາຍໃນມື້ຂອງການໂອນແຕ່ລະປະເພດ, ວົງເງິນທີ່ເຈົ້າຂອງບັນຊີໄດ້ກໍານົດໄວ້ ແລະ ວົງເງິນຂ້າມສະກຸນ.

4.3. ຂໍ້ມູນການໂອນບໍ່ຖືກເຊັ່ນ: ຊື່ບັນຊີບໍ່ຖືກ, ຂໍ້ມູນບໍ່ຄົບ (ຕົວຢ່າງ: ບໍ່ລະບຸເລກ IBAN, ບໍ່ໃສ່ທີ່ຢູ່ຜູ້ຮັບ), ເລກ ບັນຊີປາຍທາງບໍ່ຖືກ, ຈໍານວນເງິນທີ່ມີຈຸດຈໍ້າບໍ່ຖືກປະເພດ, ໂອນໄປບັນຊີປາຍທາງທີ່ໄດ້ປິດບັນຊີແລ້ວ, ໂອນໄປປະເທດຕ້ອງຫ້າມ.

4.4. ສໍາລັບການໂອນເງິນຂ້າມທະນາຄານທີ່ບໍ່ສາມາດໂອນໄປເຖິງບັນຊີປາຍທາງໄດ້ ເນື່ອງຈາກເຫດຜົນໃນມາດຕາ 4 ຂໍ້ 4.3 ໃນກໍລະນີທີ່ ທຄຕລ ບໍ່ສາມາດຕິດຕໍ່ພົວພັນລູກຄ້າໃນເວລາ 10 ວັນລັດຖະການ ນັບຈາກວັນທີ່ໄດ້ຮັບແຈ້ງຈາກທະນາຄານປາຍທາງ, ທາງ ທຄຕລ ຈະສົ່ງເງິນຄືນບັນຊີຕົ້ນທາງ ຕາມຈໍານວນເງິນທີ່ໄດ້ໂອນ ບໍ່ລວມຄ່າທໍານຽມ.

4.5. ປະໜ້າຕ່າງການໂອນເງິນ ໄວ້ດົນເກີນເວລາທີ່ກໍານົດ ທຸກທຸລະກໍາຈະຖືກຍົກເລີກທັງໝົດ.

4.6. ລະບຸເລກລະຫັດ OTP ບໍ່ຖືກຕ້ອງ ຫຼື ເຄື່ອງ OTP ຖືກລັອກ.

4.7. ເຫດຂັດຂ້ອງໃນການເຊື່ອມຕໍ່ສັນຍານອິນເຕີເນັດ ຫຼື ໂປຼແກມ Browser ທີ່ກໍາລັງປະມວນຜົນເວັບໄຊຂັດຂ້ອງ ຫຼື ບໍ່ອັບເດດ.

4.8. User ຜູ້ໃຊ້ ຍົກເລີກລາຍການ ເຊັ່ນ: ຜູ້ໃຊ້ ຍົກເລີກ ລາຍການໂອນລ່ວງໜ້າ ທີ່ຕັ້ງເວລາໄວ້ກ່ອນມື້ທີ່ມີຜົນບັງຄັບໃຊ້.

**ມາດຕາ 5: ວ່າດ້ວຍຜູ້ໃຊ້ບໍລິການ**

ຜູ້ໃຊ້ບໍລິການຮັບຊາບ, ຍອມຮັບ ແລະຕົກລົງກັບທະນາຄານດັ່ງນີ້:

5.1. ຜູ້ໃຊ້ບໍລິການ ຕົກລົງວ່າ ການດໍາເນີນງານໃດໆໃນການເຂົ້າລະບົບໃຫ້ບໍລິການ BCEL i-Bank ທີ່ໃຊ້ User ID, ລະຫັດລັບ ແລະ ລະຫັດ OTP ຖືກຕ້ອງຕາມທີ່ ທຄຕລ ໄດ້ອອກໃຫ້ຜູ້ນໍາໃຊ້ ຖືວ່າເປັນລາຍການທີ່ຜູ້ໃຊ້ບໍລິການເປັນຜູ້ສ້າງມັນຂຶ້ນມາ, ຜູ້ໃຊ້ບໍລິການຕ້ອງເປັນຜູ້ຮັບຜິດ ຊອບຕໍ່ລາຍການນັ້ນ. ທຄຕລ ຈະເປັນຜູ້ດໍາເນີນການຕາມການສ້າງລາຍການຂອງຜູ້ໃຊ້ໂດຍບໍ່ຈໍາເປັນຕ້ອງການຢືນຢັນ ຫຼື ການແຈ້ງເພີ່ມເຕີມຈາກ ທ່ານຜູ້ໃຊ້ບໍລິການ.

5.2. ທ່ານຜູ້ໃຊ້ບໍລິການບໍ່ສາມາດຍົກເລີກ, ປ່ຽນແປງ, ປະຕິເສດລາຍການທຸລະກໍາທີ່ສໍາເລັດໄປແລ້ວຜ່ານບໍລິການ BCEL i-Bank ຍົກເວັ້ນບາງປະເພດລາຍການທີ່ອະນຸຍາດໃຫ້ຍົກເລີກ ຫຼື ປ່ຽນແປງໄດ້ ໂດຍມີເງື່ອນໄຂເພື່ອຮອງຮັບການຍົກເລີກ ຫຼື ປ່ຽນແປງ ອີງຕາມແຕ່ລະປະເພດທຸລະກໍາທີ່ແຕກຕ່າງກັນ ໂດຍຈະມີການແຈ້ງໃຫ້ຊາບເທິງບໍລິການ BCEL i-Bank ເປັນແຕ່ລະໄລຍະ.

5.3. ຜູ້ໃຊ້ບໍລິການຈະນໍາໃຊ້ BCEL i-Bank ໃຫ້ຖືກຕ້ອງຕາມລະບຽບການພາຍໃນອົງກອນ ແລະ ຮັບປະກັນວ່າຜູ້ນໍາໃຊ້ຈະຮັກສາຄວາມລັບຕ່າງໆ, ຂໍ້ມູນບັນຊີ, ຂໍ້ມູນການ ເຄື່ອນໄຫວບັນຊີຂອງອົງກອນ ພ້ອມທັງປະຕິບັດຕາມຂັ້ນຕອນ, ວົງເງິນ ແລະ ລະບຽບການຕ່າງໆທີ່ກໍານົດໄວ້ນໍາ ທຄຕລ ທຸກປະການ.

5.4. ຜູ້ໃຊ້ບໍລິການຕ້ອງຮັກສາ User ID, ລະຫັດຜ່ານ ແລະ ລະຫັດ OTP ໄວ້ເປັນຄວາມລັບ.

5.5. ຜູ້ໃຊ້ບໍລິການສາມາດເຂົ້າລະບົບ ແລະ ຢືນຢັນຕົວຕົນໃນການເຮັດທຸລະກໍາ ດ້ວຍການສະແກນລາຍນິ້ວມື (FingerPrint) ແລະ ການສະແກນໃບໜ້າ (Face Scan) ຜ່ານທາງ Application BCEL i-Bank ເທິງມືຖື.

5.6. ຜູ້ນໍາໃຊ້ຍອມຮັບຕໍ່ກັບຄ່າທໍານຽມຕ່າງໆໃນການນໍາໃຊ້ບໍລິການຜະລິດຕະພັນ BCEL i-Bank ແລະ ການປັບປຸງອັດຕາຄ່າທໍານຽມ ຕາມແຕ່ລະໄລຍະ ໂດຍອະນຸຍາດໃຫ້ຕັດຄ່າທໍານຽມຈາກບັນຊີຂອງຜູ້ນໍາໃຊ້ ໂດຍອັດຕະໂນມັດ ຕາມຮອບວຽນຂອງການເກັບຄ່າທໍານຽມ ຫຼື ໃນທຸກຄັ້ງທີ່ໄດ້ຮັບການບໍລິການໄດ້ ໂດຍບໍ່ມີຂໍ້ໂຕ້ແຍ່ງ.

5.7. ກໍລະນີ ຜູ້ໃຊ້ບໍລິການໃສ່ລະຜ່ານເຂົ້າລະບົບບໍ່ຖືກຕ້ອງກາຍ 5 ຄັ້ງ, ບໍ່ໄດ້ເຂົ້ານໍາໃຊ້ BCEL i-Bank ເປັນເວລາ 6 ເດືອນຂຶ້ນໄປ, ຫຼື ບໍ່ສາມາດຊໍາລະຄ່າທໍານຽມລາຍເດືອນໄດ້ເປັນເວລາ 3 ເດືອນຕິດຕໍ່ກັນ ຈະຖືກຍົກເລີກການໃຊ້ບໍລິການຊົ່ວຄາວ.

5.8. ການກົດເອົາລະຫັດຈາກເຄື່ອງກົດລະຫັດ OTP ຜູ້ໃຊ້ບໍ່ໃຫ້ກົດ 3 ເຖິງ 10 ເທື່ອລຽນຕິດໂດຍບໍ່ໄດ້ນໍາໃຊ້ ລະບົບຈະຍົກເລີກການນໍາໃຊ້ອຸປະກອນຊົ່ວຄາວ.

5.9. ສໍາລັບຜູ້ໃຊ້ບໍລິການທີ່ລົງທະບຽນ SMS OTP, ລະບົບຈະສົ່ງລະຫັດ OTP ໃຫ້ແຕ່ສະເພາະເບີໂທລະສັບທີ່ມີຜູ້ໃຫ້ບໍລິການເຄືອຂ່າຍໃນ ສປປ ລາວ ໃນເຂດທີ່ມີສັນຍານໂທລະສັບ ພາຍໃນ ສປປ ລາວ ເທົ່ານັ້ນ.

5.10. ໃນກໍລະນີກວດພົບ ຫຼື ສົງໃສວ່າບຸກຄົນອື່ນ ຮູ້ລະຫັດຜ່ານເຂົ້າລະບົບໂດຍບໍ່ໄດ້ຮັບການອະນຸຍາດ, ທ່ານຜູ້ໃຊ້ບໍລິການຕ້ອງປ່ຽນລະຫັດຜ່ານໃໝ່ ຫຼື ແຈ້ງໃຫ້ ທຄຕລ ຮູ້ທັນທີ.

5.11. ຜູ້ໃຊ້ບໍລິການຕ້ອງຮັບຜິດຊອບຕໍ່ການລືມລະຫັດຜ່ານ ແລະ ເຄື່ອງອອກລະຫັດ OTP ເປ່ເພ. ໂດຍຜູ້ໃຊ້ບໍລິການຕ້ອງຂຽນຟອມຂໍລະຫັດໃໝ່ ຫຼື ປະກອບເຄື່ອງ OTP ໃໝ່ ເອງຕາມລະບຽບຂອງ ທຄຕລ. ສະເພາະເຄື່ອງອອກລະຫັດ OTP ສາມາດປ່ຽນໃໝ່ໄດ້ໃນຊ່ວງເວລາຮັບປະກັນເປ່ເພດ້ວຍໂຕເຄື່ອງ 1 ປີ ໂດຍນັບຈາກມື້ລົງທະບຽນ.

5.12. ທຸລະກໍາການຊໍາລະສະສາງການເງິນ ສໍາລັບເງິນໂອນຂ້າມທະນາຄານພາຍໃນປະເທດ ແລະ ເງິນໂອນຕ່າງປະເທດຜ່ານ BCEL i-Bank, ຜູ້ໃຊ້ບໍລິການ ຕ້ອງມີເອກະສານຕ່າງໆທີ່ກ່ຽວຂ້ອງຕາມລະບຽບຂອງທາງທະນາຄານກໍ່ຄືກົດໝາຍກ່ຽວກັບການຊໍາລະຊະສາງທັງພາຍໃນ ແລະ ຕ່າງປະເທດ. ຜູ້ໃຊ້ບໍລິການຕ້ອງ ຮັບປະກັນວ່າເອກະສານດັ່ງກ່າວຖືກຕ້ອງ, ບໍ່ໄດ້ດັດແກ້ ຫຼືແກ້ໄຂໃດໆໃນເອກະສານນັ້ນ. ຜູ້ໃຊ້ບໍລິການພ້ອມຈະຮັບຜິດຊອບຕໍ່ທຸກລາຍການທີ່ໄດ້ດໍາເນີນການ ຜ່ານລະບົບ BCEL i-Bank. ໃນກໍລະນີທາງ ທຄຕລ ຮຽກຮ້ອງໃຫ້ຜູ້ໃຊ້ບໍລິການສະແດງເອກະ ສານຕົ້ນສະບັບເພື່ອ ກວດກາຄວາມຖືກຕ້ອງ ຜູ້ໃຊ້ບໍລິການຕ້ອງຮັບປະກັນໃນຄວາມຖືກຕ້ອງຂອງ ເອກະສານທີ່ໄດ້ສະໜອງໃຫ້ ທຄຕລ.

**ມາດຕາ 6: ສິດທິ ແລະຄວາມຮັບຜິດຊອບຂອງຜູ້ນໍາໃຊ້**

6.1. ຜູ້ນໍາໃຊ້ສາມາດປ່ຽນແປງຮູບແບບການນໍາໃຊ້ ໂດຍສົ່ງຟອມປ່ຽນແປງຂໍ້ມູນໃຫ້ທະນາຄານ ເພື່ອໃຫ້ແທດເໝາະກັບນະໂຍບາຍພາຍໃນຂອງຜູ້ໃຊ້ບໍລິການ ແຕ່ລະໄລຍະ.

6.2. ການຮ້ອງຮຽນກ່ຽວກັບຄວາມຜິດພາດ, ຜິດລະບຽບ ທີ່ໄດ້ເກີດຂຶ້ນຢູ່ພາຍໃຕ້ຄວາມຮັບຜິດຊອບໃນການໃຫ້ບໍລິການຂອງ ທຄຕລ ຕ້ອງໄດ້ເຮັດເປັນໜັງສືຮ້ອງຮຽນ ແລະ ຄັດແນບກັບເອກະສານອ້າງອີງຕ່າງໆ (ຖ້າມີ) ແລ້ວສົ່ງໃຫ້ ທຄຕລ ພາຍໃນ 07 ວັນລັດຖະການນັບແຕ່ມື້ທີ່ ສິດທິ ແລະ ຜົນປະໂຫຍດຂອງຜູ້ໃຊ້ໄດ້ຮັບຜົນກະທົບ, ຖ້າເກີນກໍານົດເວລາດັ່ງກ່າວທາງ ທຄຕລ ຈະບໍ່ຮັບຜິດຊອບໃນການແກ້ໄຂ. ໃນກໍລະນີການຮ້ອງຮຽນດັ່ງ ກ່າວບໍ່ຢູ່ໃນຄວາມຮັບຜິດຊອບຂອງ ທຄຕລ ຜູ້ຮ້ອງຮຽນຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທີ່ເກີດຂຶ້ນຈາກ ການແກ້ໄຂການຮ້ອງຮຽນດັ່ງກ່າວຕາມລະ ບຽບ ຂອງ ທຄຕລ.

6.3. ຜູ້ນໍາໃຊ້ ຕ້ອງເຂົ້າລະບົບຜ່ານເວັບໄຊຫຼັກຂອງທະນາຄານເທົ່ານັ້ນ ແລະ ຜູ້ນໍາໃຊ້ຕ້ອງບໍ່ເຂົ້າ ຫຼື ໄປອັບເດດຂໍ້ມູນ ເລກບັນຊີ, User ID, ລະຫັດຜ່ານເຂົ້າລະບົບ, ລະຫັດໂອນເງິນ ໃຫ້ສິ່ຫຼອກລວງຕາມ Link ເວັບໄຊ, ຂໍ້ຄວາມສັ້ນ ແລະ ສື່ໂຄສະນາອອນລາຍຕ່າງໆ.

6.4. ເມື່ອພົບເຫັນກໍລະນີຕ້ອງສົງໃສ ຕ້ອງກວດສອບກັບ ທຄຕລ ກ່ອນນໍາໃຊ້ ຕາມໝາຍເລກຕິດຕໍ່ 1555 ຫຼື +85621 211011 ຫຼື ອີເມວ e-banking@bcel.com.la

6.5. ຜູ້ນໍາໃຊ້ຍອມຮັບ ແລະ ຮັບຮູ້ການປ່ຽນແປງດ້ານເງື່ອນໄຂ, ຂໍ້ຕົກລົງຕ່າງໆ ແລະ ຄ່າທໍານຽມໃນການໃຊ້ບໍລິການໂດຍທະນາຄານຈະປະກາດເປັນແຕ່ລະໄລຍະຜ່ານເວັບ BCEL i-Bank.

6.6. ຜູ້ນໍາໃຊ້ຕ້ອງນໍາໃຊ້ຜະລິດຕະພັນ BCEL i-Bank ນີ້ ໃຫ້ຖືກຕ້ອງຕາມຈຸດປະສົງຂອງທະນາຄານ ກໍຄືອໍານວຍຄວາມສະດວກໃນການເຮັດທຸລະກໍາຂອງທະນາຄານໃຫ້ຜູ້ນໍາໃຊ້ ຫຼື ອົງກອນຂອງຜູ້ນໍາໃຊ້ເທົ່ານັ້ນ. ຫ້າມນໍາໃຊ້ຜະລິດຕະພັນນີ້ເປັນເຄື່ອງມືໃຫ້ບໍລິການລູກຄ້າຂອງຕົນເພື່ອສ້າງລາຍຮັບຢ່າງເດັດຂາດ.

**ມາດຕາ 7: ສິດທິ ແລະຄວາມຮັບຜິດຊອບຂອງ ທຄຕລ**

7.1. ກໍານົດ ຫຼື ປ່ຽນແປງອັດຕາຄ່າທໍານຽມໃນການໃຊ້ບໍລິການ ຜະລິດຕະພັນຕ່າງໆ ຕາມຄວາມເໝາະສົມຂອງແຕ່ລະໄລຍະ.

7.2. ມີສິດປັອກ ຫຼື ປະຕິເສດບັນດາ ລາຍການເຄື່ອນໄຫວທຸລະກໍາ ທີ່ບໍ່ເໝາະສົມ ແລະ ບໍ່ຖືກຕ້ອງຕາມລະບຽບການຂອງ ທຄຕລ.

7.3. ທຄຕລ ຈະປະຕິບັດການລົງທະບຽນ ຫຼື ປ່ຽນແປງຂໍ້ມູນ ຕາມຟອມສະໝັກ / ແບບຟອມປ່ຽນແປງການນໍາໃຊ້ ຈາກລູກຄ້າ.

7.4. ໃນກໍລະນີມີການບໍາລຸງຮັກສາລະບົບ, ຍົກລະດັບລະບົບ ທຄຕລມີສິດຢຸດການນໍາໃຊ້ຂອງລູກຄ້າຊົ່ວຄາວ.

7.5. ການໃຫ້ບໍລິການອາດຈະຖືກຢຸດທັນທີພາຍຫຼັງທີ່ທຄຕລໄດ້ກວດພົບວ່າຜູ້ໃຊ້ບໍລິການບໍ່ປະຕິບັດຕາມເງື່ອນໄຂແລະຂໍ້ກໍານົດທີ່ໄດ້ຕົກລົງກັນ.

7.6. ຮັບປະກັນຜົນປະໂຫຍດສູງສຸດຂອງລູກຄ້າ ຕາມຂໍ້ກໍານົດ ແລະ ເງື່ອນໄຂໃນການໃຊ້ບໍລິການ BCEL i-Bank ຂອງ ທຄຕລ.

7.7. ເກັບຂໍ້ມູນທີ່ກ່ຽວຂອ້ງກັບລູກຄ້າໄວ້ເປັນຄວາມລັບເຊັ່ນ: ຂໍ້ມູນບັນຊີ, ຂໍ້ມູນການເຄື່ອນໄຫວ ເປັນຄວາມລັບຕາມລະບຽບການຂອງ ທຄຕລ.

7.8. ທຄຕລ ຈະບໍ່ຮັບຜິດຊອບຕໍ່ຄວາມເສຍຫາຍຕ່າງໆທີ່ເກີດຂຶ້ນ ອັນເນື່ອງມາຈາກຜູ້ໃຊ້ບໍລິການບໍ່ປະຕິບັດຕາມເງື່ອນໄຂຕ່າງໆໃນເອກະສານສະບັບນີ້ ແລະ ໂດຍສະເພາະ ມາດຕາ 3, ມາດຕາ 4 ແລະ ມາດຕາ 5 ໂດຍຜູ້ໃຊ້ບໍລິການເອງນໍາໃຊ້ໄປໃນທາງທີ່ຜິດຕໍ່ລະບຽບກົດໝາຍ ແລະ ເຂົ້າ Link ເວັບໄຊ ຕ່າງໆທີ່ບໍ່ປອດໄພ ແລະ ປ້ອນຂໍ້ມູນ ໃຫ້ຜູ້ບໍ່ຫັວງດີ ທີ່ນໍາພາຄວາມເສຍຫາຍມາໃຫ້ຜູ້ໃຊ້ບໍລິການ.

7.9. ທຄຕລ ຈະບໍ່ຮັບຜິດຊອບຕໍ່ເຫດສຸດວິໄສຕ່າງໆພາຍນອກທີ່ເຮັດໃຫ້ທຸລະກໍາການເງິນມີບັນຫາເຊັ່ນ:

• ຄວາມບົກຜ່ອງຂອງລະບົບຄອມພິວເຕີ, ລະບົບສື່ສານອິນເຕີເນັດຂອງຜູ້ໃຊ້ບໍລິການເອງ ແລະ ຂອງຜູ້ໃຫ້ບໍລິການອິນເຕີເນັດ ທີ່ເຮັດໃຫ້ທຸລະກໍາການເງິນບໍ່ຖືກຕ້ອງ ໃນກໍລະນີທີ່ລະບຸຂໍ້ມູນທຸລະກໍາດັ່ງກ່າວຖືກຕ້ອງແລ້ວເຊັ່ນ: ໂອນໄປແລ້ວເງິນຖືກຫັກເປັນ 2 ເທື່ອ, ລະບົບບໍ່ຫັກລ້າງໜີ້ທີ່ຄ້າງຊໍາລະ, ໜ້າຕ່າງການເຮັດທຸລະກໍາຄ້າງ, ດາວໂຫຼດລາຍງານບໍ່ໄດ້, ບັນຫາທີ່ເນື່ອງມາຈາກ Browser ຕ່າງໆ ທີ່ສົ່ງຜົນຕໍ່ການນໍາໃຊ້ເຮັດທຸລະກໍາ.

• ບັນຫາໄພທໍາມະຊາດເຊັ່ນ: ໄຟຟ້າດັບ, ນໍ້າຖ້ວມ, ຟ້າຜ່າ ແລະໄພທໍາມະຊາດອື່ນໆ ທີ່ເຮັດໃຫ້ທຸລະກໍາການເງິນບໍ່ສາມາດດໍາເນີນການໄດ້.

• ບັນຫາເລກບັນຊີບໍ່ຖືກຕ້ອງ ເຊັ່ນ: ທະນາຄານມີການປ່ຽນແປງເລກບັນຊີ ໃນລະບົບເກົ່າ 13 ໂຕເລກ ປ່ຽນມາລະບົບໃໝ່ 18 ໂຕເລກ, ບັນຊີປາຍທາງປິດແລ້ວເປີດເປັນເລກໃໝ່ແລ້ວ.

**ມາດຕາ 8: ກົດໝາຍອ້າງອີງກ່ຽວກັບການແກ້ໄຂຂໍ້ຂັດແຍ່ງ**

ເງື່ອນໄຂ ແລະ ຂໍ້ຜູກພັນໃນການໃຊ້ບໍລິການ BCEL i-Bank ຂອງ ທຄຕລ ສະບັບນີ້ໄດ້ຮັບການຄຸ້ມຄອງຈາກກົດໝາຍ ສປປ ລາວ. ຖ້າເນື້ອໃນໃດໜຶ່ງໃນເງື່ອນໄຂການນໍາໃຊ້ບໍລິການ BCEL i-Bank ສະບັບນີ້ ມີຂໍ້ຂັດແຍ່ງ ຫຼື ຂັດກັບຂໍ້ກໍານົດຂອງກົດໝາຍ, ຈະຖືວ່າເປັນຂໍ້ກໍານົດທີ່ເປັນໂມຄະບາງສ່ວນເທົ່ານັ້ນ, ເນື້ອໃນ ຫຼື ຂໍ້ກໍານົດສ່ວນອື່ນຈະຍັງມີຜົນບັງຄັບໃຊ້ຢູ່.

ໃນກໍລະນີມີຂໍ້ຂັດແຍ່ງເກີດຂຶ້ນຈາກການໃຫ້ບໍລິການ ແລະ ການນໍາໃຊ້ BCEL i-Bank ລະຫວ່າງຜູ້ນໍາໃຊ້ບໍລິການ ກັບ ທຄຕລ, ການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ, ກ່ອນອື່ນໝົດ ຈະຕ້ອງໄດ້ຮັບການແກ້ໄຂດ້ວຍການໄກ່ເກ່ຍ. ກໍລະນີບໍ່ສາມາດໄກ່ເກ່ຍກັນໄດ້, ຝ່າຍກ່ຽວຂ້ອງສາມາດຟ້ອງຮ້ອງຕາມລະບົບຍຸຕິທໍາແຫ່ງ ສປປ ລາວ. ຖ້າຫາກລູກຄ້າບໍ່ທັນເຂົ້າໃຈບາງເນື້ອໃນ ຫຼື ເງື່ອນໄຂ ຄວນສອບຖາມນໍາພະນັກງານ ທຄຕລ ເພື່ອຂໍຄໍາອະທິບາຍກະຈ່າງແຈ້ງ.

**ມາດຕາ 9: ບັນຫາຕົກລົງກັນອື່ນໆ ແລະ ການປະຕິບັດ**

ເງື່ອນໄຂ ແລະ ຂໍ້ຜູກພັນໃນການໃຊ້ບໍລິການ BCEL i-Bank ທີ່ອອກໂດຍ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ພ້ອມກັບເອກະສານຕິດຂັດທີ່ກ່ຽວຂ້ອງ ຖືວ່າເປັນສ່ວນໜຶ່ງທີ່ບໍ່ສາມາດແຍກອອກຈາກກັນ. ລູກຄ້າໄດ້ອ່ານ, ເຂົ້າໃຈ, ຮັບຮູ້ ແລະ ຍອມປະຕິບັດໃຫ້ຖືກຕ້ອງທຸກປະການ. ບັນດາເອກະສານດັ່ງກ່າວມີຜົນບັງຄັບໃຊ້ນັບຕັ້ງແຕ່ມື້ໃຫ້ລູກຄ້າໃຫ້ຂໍ້ມູນ, ເຊັນຊື່ ແລະປະທັບກາໃນແບບຟອມ ລົງທະບຽນຂໍນໍາໃຊ້ BCEL i-Bank ເປັນຕົ້ນໄປ.

<u>ພະນັກງານ ທຄຕລ</u>　　　　<u>ເຈົ້າຂອງບັນຊີ</u>

# ລາຍການອັດຕາຄ່າບໍລິການ BCEL i-Bank (ສຳລັບລູກຄ້າ ນິຕິບຸກຄົນ)

| | |
|---|---|
| **1. ຄ່າສະໝັກລົງທະບຽນນຳໃຊ້** | ບໍ່ເກັບ |
| **2. ທຳນຽມລາຍເດືອນ** | 20.000 ກີບ/ເດືອນ |
| **3. ຄ່າອຸປະກອນອອກລະຫັດ (TOKEN OTP)** | 15 ໂດລາ /ເຄື່ອງ |
| **4. ວົງເງິນທຸລະກຳສູງສຸດຕໍ່ມື້** | 6.000.000.000 ກີບ /ມື້ |
| **5. ຄ່າບໍລິການໂອນເງິນພາຍໃນສູງສຸດຕໍ່ເດືອນ** | ເກັບຄ່າບໍລິການຕາມຂັ້ນບັນໄດຈົນຮອດ 300.000 ກີບ, ລາຍການຕໍ່ໄປເກັບ 1.000 ກີບ/ລາຍການ ເກັບຈົນຮອດ 10.000.000 ກີບ, ແລ້ວລາຍການຕໍ່ໄປເກັບ 500 ກີບ/ລາຍການ (ລູກຄ້າ/ເດືອນ) |
| **6. ຄ່າທຳນຽມການໂອນເງິນລະຫ່ວາງບັນຊີພາຍໃນ ທຄຕລ** | |
| ➢ ວົງເງິນສະສົມພາຍໃນເດືອນ: 100.000.000 ກີບ | ບໍ່ເກັບ |
| ➢ ເກີນວົງເງິນສະສົມ ແຕ່ຈຳນວນເງິນໂອນ 100.000.000 ກີບ ລົງມາ | 2.000 ກີບ / ຄັ້ງ |
| ➢ ເກີນວົງເງິນສະສົມ ຈຳນວນເງິນ 100.000.001 - 300.000.000 ກີບ | 4.000 ກີບ / ຄັ້ງ |
| ➢ ຈຳນວນເງິນ 300.000.001 - 500.000.000 ກີບ | 6.000 ກີບ / ຄັ້ງ |
| ➢ ຈຳນວນເງິນ 500.000.001 - 1.000.000.000 ກີບ | 8.000 ກີບ / ຄັ້ງ |
| ➢ ຈຳນວນເງິນ 1.000.000.001 ກີບ ຂຶ້ນໄປ | 10.000 ກີບ / ຄັ້ງ |
| **7. ບໍລິການໂອນລອຍ** | 10.000 ກີບ / ຄັ້ງ (ວົງເງິນທຸລະກຳສູງສຸດ 100.000.000 ກີບ/ມື້) |
| **8. ໂອນເງິນເຂົ້າບັນຊີທະນາຄານທຸລະກິດອື່ນຢູ່ ທຄຕລ ແລະ ການໂອນເງິນເຂົ້າບັນຊີຢູ່ທະນາຄານທຸລະກິດອື່ນ ຜ່ານ BCEL i-Bank** | |
| ➢ ລາຍການທີ່ມີວົງເງິນ 200.000.000 ກີບລົງມາ | 10.000 ກີບ / ຄັ້ງ |
| ➢ ລາຍການທີ່ມີວົງເງິນ 200.000.001 ກີບ - 500.000.000 ກີບ | 15.000 ກີບ / ຄັ້ງ |
| ➢ ລາຍການທີ່ມີວົງເງິນ 500.000.001 ກີບ - 1.000.000.000 ກີບ | 20.000 ກີບ / ຄັ້ງ |
| ➢ ລາຍການທີ່ມີວົງເງິນ 1.000.000.001 ກີບ - 5.000.000.000 ກີບ | 25.000 ກີບ / ຄັ້ງ |
| ➢ ລາຍການທີ່ມີວົງເງິນ 5.000.000.001 ກີບຂຶ້ນໄປ | 30.000 ກີບ / ຄັ້ງ |
| ໝາຍເຫດ: ທະນາຄານຜູ້ຮັບເງິນ ອາດຈະເກັບຄ່າທຳນຽມເງິນໂອນຂາເຂົ້າເພີ່ມຕື່ມ ອີງຕາມລະບຽບການພາຍໃນຂອງແຕ່ລະທະນາຄານ. | |
| **9. ໂອນເງິນຕ່າງປະເທດຂາອອກ** | ອີງຕາມຄ່າທຳນຽມເງິນໂອນຕ່າງປະເທດຂາອອກ (ວົງເງິນທຸລະກຳສູງສຸດ 100.000.000 ກີບ/ມື້) |
| **10. ບໍລິການເບີກຈ່າຍເງິນເດືອນ** | 500 ກີບ/ລາຍການຜູ້ຮັບເງິນ |
| **11. ຄ່າທຳນຽມອອກລະຫັດໃໝ່** | 10.000 ກີບ/ຄັ້ງ |
| **12. ຊຳລະໃບບິນ (Bill Payment)** | ອີງຕາມສັນຍາລະຫວ່າງ ທຄຕລ ແລະ ບໍລິສັດ |
| **13. ການແກ້ໄຂບັນຫາ** | |
| ➢ ແກ້ໄຂບັນຫາລາຍການ ບົວເພເມັນ | 10.000 ກີບ/ຄັ້ງ |
| ➢ ແກ້ໄຂເບີໂທ ຫຼື E-Mail ທີ່ຮັບຂໍ້ຄວາມລະຫັດ OTP ແລະຮັບການແຈ້ງເຕືອນ | 5.000 ກີບ/ຄັ້ງ |
| ➢ ແກ້ໄຂບັນຫາ ລາຍການໂອນເງິນເດືອນ | ບໍ່ເກັບ |
| ➢ ແກ້ໄຂລາຍການໂອນລອຍ, ການໂອນເງິນເຂົ້າບັນຊີທະນາຄານທຸລະກິດອື່ນຢູ່ ທຄຕລ ແລະ ການໂອນເງິນເຂົ້າບັນຊີຢູ່ທະນາຄານທຸລະກິດອື່ນ (ການແກ້ໄຂຜ່ານປ່ອງບໍລິການ) | 10.000 ກີບ/ລາຍການ/ຄັ້ງ |
| **14. ເບິ່ງບັນຊີສຳຮອງ (Account Statement)** | ບໍ່ເກັບ |
| **15. ຄ່າທຳນຽມແລກປ່ຽນເງິນຕາ (ສະເພາະລາຍການແລກປ່ຽນຈາກສະກຸນເງິນກີບເປັນໂດລາ ແລະ ບາດ)** | ອີງຕາມຄ່າທຳນຽມທີ່ແຈ້ງຜ່ານ BCEL i-Bank |
| **16. ເປີດນຳໃຊ້ User** | |
| ➢ ເປີດນຳໃຊ້ບໍ່ເກີນ 6 User ID | ບໍ່ເກັບ |
| ➢ ເປີດນຳໃຊ້ຫຼາຍກວ່າ 6 User ID (ນັບແຕ່ເປີດ User ID ທີ 7 ຂຶ້ນໄປ) | 5.000 ກີບ / User ID |
| **17. ຄ່າທຳນຽມການອອກໃບຢັ້ງຢືນຂໍ້ມູນຜູ້ນຳໃຊ້ BCEL i-Bank** | 50.000 ກີບ/ຄັ້ງ/ລູກຄ້າ |
| **18. ການສະໜອງຂໍ້ມູນທຸລະກຳຜ່ານ BCEL i-Bank ໃຫ້ແກ່ລູກຄ້າ** | |
| ➢ 1 ເດືອນ - 1 ປີ | 20.000 ກີບ, 3 ໂດລາ, 90 ບາດ, 20 ຢວນ/ສະບັບ/ບັນຊີ (ບໍ່ເກີນ 500 ລາຍການ, ຖ້າເກີນ ເກັບເພີ່ມ 5.000 ກີບ, 1 ໂດລາ, 25 ບາດ, 10 ຢວນ/ ສະບັບ) |
| ➢ ເກີນ 1 ປີ - 2 ປີ | 50.000 ກີບ, 7 ໂດລາ, 220 ບາດ, 50 ຢວນ/ສະບັບ/ບັນຊີ (ບໍ່ເກີນ 500 ລາຍການ, ຖ້າເກີນ ເກັບເພີ່ມ 5.000 ກີບ, 1 ໂດລາ, 25 ບາດ, 10 ຢວນ/ ສະບັບ) |
| ➢ ເກີນ 2 ປີ - 3 ປີ | 100.000 ກີບ, 13 ໂດລາ, 440 ບາດ, 90 ຢວນ/ສະບັບ/ບັນຊີ (ບໍ່ເກີນ 750 ລາຍການ, ຖ້າເກີນ ເກັບເພີ່ມ 5.000 ກີບ, 1 ໂດລາ, 25 ບາດ, 10 ຢວນ/ ສະບັບ) |
| ➢ ເກີນ 3 ປີ - 4 ປີ | 200.000 ກີບ, 25 ໂດລາ, 880 ບາດ, 180 ຢວນ/ສະບັບ/ບັນຊີ (ບໍ່ເກີນ 750 ລາຍການ, ຖ້າເກີນ ເກັບເພີ່ມ 5.000 ກີບ, 1 ໂດລາ, 25 ບາດ, 10 ຢວນ/ ສະບັບ) |

| | |
|---|---|
| ➢ ເກີນ 4 ປີ - 5 ປີ | 300.000 ກີບ, 37 ໂດລາ, 1.310 ບາດ, 260 ຢວນ/ສະບັບ/ບັນຊີ (ບໍ່ເກີນ 1.250 ລາຍການ, ຖ້າເກີນ ເກັບເພີ່ມ 20.000 ກີບ, 3 ໂດລາ, 90 ບາດ, 20 ຢວນ/ ສະບັບ) |
| ➢ ເກີນ 5 ປີ - 10 ປີ | 500.000 ກີບ, 65 ໂດລາ, 2.200 ບາດ, 430 ຢວນ/ສະບັບ/ບັນຊີ (ບໍ່ເກີນ 1.250 ລາຍການ, ຖ້າເກີນ ເກັບເພີ່ມ 20.000 ກີບ, 3 ໂດລາ, 90 ບາດ, 20 ຢວນ/ ສະບັບ) |
| ➢ ເກີນ 10 ປີຂຶ້ນໄປ (ກໍລະນີສາມາດສະໜອງໃຫ້ໄດ້) | 1.000.000 ກີບ, 125 ໂດລາ, 4.400 ບາດ, 860 ຢວນ/ສະບັບ/ບັນຊີ (ບໍ່ເກີນ 2.500 ລາຍການ, ຖ້າເກີນ ເກັບເພີ່ມ 50.000 ກີບ, 7ໂດລາ, 220 ບາດ, 50 ຢວນ/ ສະບັບ) |
| **19. ການປັບວົງເງິນ ແລະ ເງື່ອນໄຂພິເສດຕ່າງໆ ຕາມການສະເໜີຂອງລູກຄ້າ** | 100.000 ກີບ/ຄັ້ງ |
| **20. ຄ່າທຳນຽມການເຊື່ອມຕໍ່ລະບົບ BCEL i-Bank** | |
| ➢ ການເຊື່ອມຕໍ່ລະບົບ BCEL i-Bank ກັບລະບົບການເງິນຂອງລູກຄ້າ ທຄຕລ ເພື່ອຮອງຮັບການເຮັດທຸລະກຳ | ອີງຕາມສັນຍາຕ່ຳສຸດບໍ່ຫຼຸດ 5 ລ້ານກີບ/ສັນຍາ |
| ➢ ຄ່າບໍາລຸງຮັກສາການເຊື່ອມຕໍ່ປະຈໍາປີ | 2.500.000 ກີບ/ປີ |
| **21. ບໍລິການໂອນເງິນດ່ວນຊຸມຊົນ BCOME** | ເກັບຕາມຄ່າທຳນຽມບໍລິການໂອນເງິນດ່ວນຊຸມຊົນ BCOME |

(ທຄຕລ ສະຫງວນສິດໃນການປ່ຽນແປງ ອັດຕາຄ່າທຳນຽມໃນການໃຊ້ບໍລິການ ໂດຍທະນາຄານຈະປະກາດ ຜ່ານເວັບໄຊ BCEL i-Bank ເປັນແຕ່ລະໄລຍະ)

**ພະນັກງານ ທຄຕລ** **ລາຍເຊັນເຈົ້າຂອງບັນຊີ**

ເລກທີ: . . . . . . . . . . . . . . . . . . . . . . . .

. . . . . . . . . . . . . . . . . . ວັນທີ . . . . / . . . . / . . . . . . . .

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---===000===----

# ໃບມອບສິດ

ຮຽນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເລື່ອງ: ມອບສິດໃຫ້ຜູ້ຕາງໜ້າມາພົວພັນກ່ຽວກັບຜະລິດຕະພັນ BCEL i-Bank.

ຂ້າພະເຈົ້າ ຊື່ ແລະ ນາມສະກຸນ: . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . .

ບ່ອນເຮັດວຽກ: . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . .

ເບີໂທລະສັບ: . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . ອີເມລ໌: . . . . . . . . . . . . . . . . . . . . . . . . . . . . . . . .

ເປັນເຈົ້າຂອງບັນຊີເລກທີ: . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . .

ຊື່ບັນຊີ: . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . .

ໄດ້ມອບສິດໃຫ້ແກ່ ທ້າວ/ນາງ (ຊື່ ແລະ ນາມສະກຸນ): . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . .

ປະຈຸບັນຢູ່ບ້ານ: . . . . . . . . . . . . . . . . . . . . . . . ເມືອງ: . . . . . . . . . . . . . . . . . . . . . . . . . . . . . . . . . . ແຂວງ: . . . . . . . . . . . . . . . . . . . . .

ບັດປະຈຳຕົວ/ ສຳມະໂນຄົວ / ໜັງສືເດີນທາງ ເລກທີ: . . . . . . . . . . . . . . . . . . . . . . . . . . . . . ເບີໂທລະສັບ: . . . . . . . . . . . . . . . . . . . . . . .

**ມີຈຸດປະສົງເພື່ອໃຫ້ຜູ້ກ່ຽວມາພົວພັນແທນຂ້າພະເຈົ້າກ່ຽວກັບ:** ☐ **ລົງທະບຽນນຳໃຊ້** ☐ **ປ່ຽນແປງຂໍ້ມູນ**

ຈຸດປະສົງອື່ນໆ: . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . .

ຂ້າພະເຈົ້າ ຂໍຢັ້ງຢືນວ່າ ຜູ້ກ່ຽວແມ່ນຜູ້ຕາງໜ້າທີ່ໄດ້ຮັບການມອບໝາຍຈາກຂ້າພະເຈົ້າແທ້. ກໍລະນີທີ່ໄດ້ດຳເນີນການໃຫ້ແລ້ວ, ຖ້າເກີດມີບັນຫາຕິດພັນກັບການມອບສິດຄັ້ງນີ້ ຂ້າພະເຈົ້າ ຂໍຮັບຜິດຊອບຕາມລະບຽບທຸກປະການ. ໃບມອບສິດສະບັບນີ້ມີຜົນສັກສິດ 07 (ເຈັດ) ວັນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງໄດ້ເຮັດໃບມອບສິດໃຫ້ຜູ້ກ່ຽວໄວ້ເພື່ອເປັນຫຼັກຖານ ແລະ ຫວັງວ່າທ່ານ ຈະອຳນວຍຄວາມສະດວກໃຫ້ຜູ້ກ່ຽວດ້ວຍ.

| **<u>ລາຍເຊັນຜູ້ຮັບສິດ</u>** | **<u>ລາຍເຊັນຜູ້ມອບສິດ</u>** |
|---|---|

**ເອກະສານທີ່ຕ້ອງປະກອບ:**

- ບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືເດີນທາງ ຂອງທັງສອງຝ່າຍ.

**ໝາຍເຫດ:**

- ຖ້າລາຍເຊັນໃນບັນຊີຫາກເກີນໜຶ່ງລາຍເຊັນ ຕ້ອງໄດ້ເຊັນຮັບຮູ້ຮ່ວມກັນທັງໝົດຕາມເງື່ອນໄຂຂອງລາຍເຊັນທີ່ໄດ້ລະບຸໄວ້ໃນບັນຊີດັ່ງກ່າວ.
- ໃບມອບສິດສະບັບນີ້ໃຊ້ໄດ້ພຽງຄັ້ງດຽວ.
- ຕ້ອງເປັນຜູ້ທີ່ໄດ້ຮັບສິດພຽງຜູ້ດຽວເທົ່ານັ້ນ ທີ່ສາມາດຮັບເອົາຊອງລະຫັດລັບ ເພື່ອນຳໃຊ້ BCEL i-Bank ໄດ້.